FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ເລກທີ 110 /ຈຂ.ຊກ

ເຊກອງ, ລົງວັນທີ 26 /11/ 2020

# ຂໍ້ຕົກລົງ

## ວ່າດ້ວຍແຕ່ງຕັ້ງຄະນະປະທານ,ກອງເລຂາ ຄະນະກຳມະການ ຄຸ້ມຄອງສິ່ງແວດລ້ອມທຳມະຊາດ-ສັງຄົມ ແລະ ແກ້ໄຂຜົນກະທົບ ຈາກໂຄງການພັດທະນາ ທົ່ວແຂວງເຊກອງ

- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ( ສະບັບປັບປຸງ ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015. ພາກທີ III, ໝວດທີ 4, ມາດຕາ 20. ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງຕາມ:ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ,ສະບັບປັບປຸງເລກທີ29/ສພຊ,ລົງວັນທີ18ທັນວາ2012.
- ອີງຕາມ: ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ84/ລບ, ລົງວັນທີ 05 ເມສາ 2016. ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ.
- ອີງຕາມ: ບົດລາຍງານຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ສະບັບເລກທີ 45/ພຊສລົງວັນທີ 11 ພະຈິກ 2020.

## ເຈົ້າແຂວງ ຕົກລົງ:

ມາດຕາ1: ເຫັນດີແຕ່ງຕັ້ງຄະນະປະທານ ແລະ ກອງເລຂາ ຄະນະກຳມະການຄຸ້ມຄອງສິ່ງແວດລ້ອມທຳມະຊາດ-ສັງຄົມ ແລະ ແກ້ໄຂຜົນກະທົບ ຈາກໂຄງການພັດທະນາ ພາຍໃນແຂວງເຊກອງ ເຊິ່ງມີລາຍລະອຽດລຸ່ມນີ້:

**I. ຄະນະຮັບຜິດຊອບ-ຊີ້ນຳ:**

| | | | |
|---|---|---|---|
| 1. | ທ່ານ | ຮອງເຈົ້າແຂວງ | ເປັນປະທານ; |
| 2. | ທ່ານ | ຫົວໜ້າພະແນກ ຊສ ແຂວງ | ເປັນຮອງ; |
| 3. | ທ່ານ | ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ແຂວງ | ເປັນຮອງ; |
| 4. | ທ່ານ | ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ | ເປັນຮອງ; |
| 5. | ທ່ານ | ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ | ເປັນກຳມະການ; |
| 6. | ທ່ານ | ຫົວໜ້າຫ້ອງວ່າການແຂວງ | ເປັນກຳມະການ; |
| 7. | ທ່ານ | ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ | ເປັນກຳມະການ; |
| 8. | ທ່ານ | ປະທານແນວລາວສ້າງຊາດແຂວງ | ເປັນກຳມະການ; |
| 9. | ທ່ານ | ຫົວໜ້າພະແນກການເງິນແຂວງ | ເປັນກຳມະການ; |
| 10. | ທ່ານ | ເຈົ້າເມືອງ 4 ຕົວເມືອງ | ເປັນກຳມະການ; |
| 11. | ທ່ານ | ຄະນະກອງບັນຊາທະຫານແຂວງ | ເປັນກຳມະການ; |
| 12. | ທ່ານ | ຄະນະກອງບັນຊາການ ປກສ ແຂວງ | ເປັນກຳມະການ; |
| 13. | ທ່ານ | ຄະນະພະແນກພາຍໃນແຂວງ | ເປັນກຳມະການ; |
| 14. | ທ່ານ | ປະທານສະຫະພັນກຳມະບານແຂວງ | ເປັນກຳມະການ; |
| 15. | ທ່ານ | ປະທານສະຫະພັນແມ່ຍິງແຂວງ | ເປັນກຳມະການ; |

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

สแกนด้วย CamScanner

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

16. ທ່ານ ເລຂາຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງເຊກອງ ເປັນກຳມະການ;
17. ທ່ານ ປະທານບໍລິສັດ ຜູ້ປະກອບການ( ຜູ້ພັດທະນາໂຄງການທີ່ກ່ຽວຂ້ອງ) ເປັນກຳມະການ;
18. ທ່ານ ເລຂາພັກ ຫຼື ນາຍບ້ານ-ບ້ານ ບ່ອນທີ່ຕັ້ງໂຄງການ ເປັນກຳມະການ;

**II. ກອງເລຂາຊ່ວຍວຽກຄະນະກຳມະການ:**

1. ທ່ານ ຄະນະພະແນກ ຊສ ແຂວງ ( ຜູ້ຊີ້ນຳວຽກສິ່ງແວດລ້ອມ ) ເປັນຫົວໜ້າ;
2. ທ່ານ ຄະນະພະແນກພະລັງງານ ແລະ ບໍ່ແຮ່ແຂວງ ເປັນຮອງ;
3. ທ່ານ ຄະນະພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຮອງ;
4. ທ່ານ ຫົວໜ້າຂະແໜງສິ່ງແວດລ້ອມ ເປັນຄະນະ
5. ທ່ານ ຫົວໜ້າຫ້ອງການ ຊສ 4 ຕົວເມືອງ ເປັນຄະນະ (ທັງເປັນຫົວໜ້າກອງເລຂາຂັ້ນເມືອງ )
6. ທ່ານ ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ 4 ຕົວເມືອງ ເປັນຄະນະ

**ມາດຕາ2: ຄະນະກຳມະການຂັ້ນແຂວງ ແລະ ກອງເລຂາຊ່ວຍວຽກ ເຄື່ອນໄຫວຕາມສິດ ແລະ ໜ້າທີ່ ດັ່ງນີ້:**

❖ **ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບ:**

1. ຈັດກອງປະຊຸມຄົ້ນຄ້ວາ, ປຶກສາຫາລືແບ່ງຄວາມຮັບຜິດຊອບພາຍໃນຈະແຈ້ງ ແລະ ກຳນົດແຜນການເຄື່ອນໄຫວດ້ານຕ່າງໆຮ່ວມກັບຜູ້ພັດທະນາໂຄງການ ແລະ ອຳນາດການປົກຄອງທີ່ກ່ຽວຂ້ອງຂັ້ນຕ່າງໆເພື່ອເຮັດການຈັດຕັ້ງປະຕິບັດວຽກງານມີຄວາມເປັນເອກະພາບກັນສູງ ແລະ ສຳເລັດຜົນດ້ວຍດີ;
2. ຕິດຕາມ, ກວດກາມາດຕະຖານ-ເຕັກນິກ ແລະ ປະເມີນຜົນກະທົບດ້ານຕ່າງໆ ຈາກການພັດທະນາໂຄງການແຕ່ລະໄລຍະ ເພື່ອຮັບປະກັນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ຕາມສັນຍາທີ່ກຳນົດໄວ້.
3. ເອົາໃຈໃສ່ຊີ້ນຳ-ນຳພາ ໃນການຄຸ້ມຄອງສິ່ງແວດລ້ອມ ທາງທຳມະຊາດ ແລະ ສັງຄົມ, ເກັບກຳຂໍ້ມູນດ້ານຕ່າງໆ ທີ່ຖືກຜົນກະທົບຈາກໂຄງການພັດທະນາ ທົ່ວແຂວງເຊກອງ ໃຫ້ລະອຽດຊັດເຈນເພື່ອນຳມາຄົ້ນຄ້ວາ ແລະ ແກ້ໄຂ ໃຫ້ສອດຄ່ອງກັບລະບຽບຫຼັກການ ແລະ ຍຸດຕິທຳ, ໂດຍສະເພາະແມ່ນການຊົດເຊີຍຄ່າເສຍຫາຍ, ການຈັດສັນທີ່ດິນທຳການຜະລິດ, ການຍົກຍ້າຍປະຊາຊົນ ແລະ ຕ້ອງຮັບປະກັນຄວາມສະຫງົບປອດໄພ, ຄວາມເປັນລະບຽບຮຽບຮ້ອຍ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ຖືກຜົນກະທົບ ໃຫ້ດີຂື້ນ.
4. ກຳນົດລາຄາທົດແທນ, ອັດຕາການທົດແທນ ແລະ ຮັບຮອງລາຄາຫົວໜ່ວຍການທົດແທນຄ່າເສຍຫາຍ ພ້ອມທັງແກ້ໄຂຂໍ້ຂັດແຍ່ງຕ່າງໆ ແລະ ໄກ່ເກ່ຍຕໍ່ລອງການຊົດເຊີຍ ພ້ອມນັ້ນກໍ່ໃຫ້ກຳນົດໄລຍະເວລາການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານແຕ່ລະໄລຍະ, ກຳນົດເຂດຈັດສັນຍົກຍ້າຍ, ໄລຍະເວລາຂ້າມຜ່ານ ແລະ ໄລຍະການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກທຸກໂຄງການ;
5. ປະສານສົມທົບກັບຜູ້ພັດທະນາໂຄງການ ແລະ ພາກສ່ວນກ່ຽວຂ້ອງຂັ້ນຕ່າງໆ ເພື່ອກຳນົດເຂດຈັດສັນເນື້ອທີ່ດິນທຳການຜະລິດໃໝ່ ທີ່ເຫັນວ່າມີຄວາມເໝາະສົມ ໃຫ້ປະຊາຊົນສາມາດທຳການຜະລິດ ແລະ ທຳມາຫາກິນສະດວກຂຶ້ນໂດຍອີງຕາມເງື່ອນໄຂຕົວຈິງຂອງພື້ນທີ່ ທີ່ມີ ແລະ ໃຫ້ພຽງພໍ.
6. ກຳນົດວິທີການແລະຄຸ້ມຄອງການນຳໃຊ້ງົບປະມານບໍລິຫານ ທີ່ໂຄງການສະໜອງໃຫ້ຢ່າງມີປະສິດທິຜົນ, ມີຄວາມໂປ່ງໃສ ແລະ ຖືກຕ້ອງຕາມລະບຽບວິໄນການເງິນ.
7. ເອົາໃຈໃສ່ຊຸກຍູ້, ໂຄສະນາແນະນຳ ແລະ ຕິດຕາມ-ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງແວດລ້ອມທາງທຳມະຊາດ-ສັງຄົມ ໃຫ້ຖືວ່າເປັນພັນທະໜ້າທີ່ ແລະ ຄວາມຮັບຜິດຊອບທົ່ວປວງຊົນ ເພື່ອຟື້ນຟູສິ່ງແວດລ້ອມຄືນສູ່ສະພາບປົກກະຕິ ແລະ ບໍ່ມີຜົນກະທົບໃນໄລຍະຍາວ ຈາກການພັດທະນາໂຄງການຕ່າງໆ.
8. ສຳລັບຄະນະກຳມະການຂັ້ນເມືອງ ຖ້າຫາກວ່າມີຄວາມຈຳເປັນແຕ່ງຕັ້ງເພີ່ມ ແມ່ນສະເໜີໃຫ້ຄະນະປະທານຂັ້ນແຂວງອອກຂໍ້ຕົກລົງແຕ່ງຕັ້ງ ບົນພື້ນຖານການເຫັນດີ ແລະ ການສະເໜີຂອງເມືອງ;
9. ລາຍງານຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ຂອງການຈັດຕັ້ງປະຕິບັດວຽກງານໃນແຕ່ລະໄລຍະ ໃຫ້ຂັ້ນເທິງໄດ້ຮັບຊາບເປັນປົກກະຕິ;



FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

สแกนด้วย CamScanner

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

❖ **ສິດ ແລະ ໜ້າທີ່ຂອງກອງເລຂາຊ່ວຍວຽກ:**

1. ເປັນເສນາທິການໃນການສ້າງແຜນງົບປະມານບົນພື້ນຖານປະຢັດ, ສ້າງແຜນການເຄື່ອນໄຫວໃຫ້ຄະນະກຳມະການຂັ້ນແຂວງ ເພື່ອຈັດຕັ້ງປະຕິບັດວຽກງານ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.
2. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕ່າງໆ ເພື່ອເກັບກຳ ແລະ ສັງລວມຂໍ້ມູນກ່ຽວຂ້ອງໃຫ້ຄົບຖ້ວນຊັດເຈນ ແລະ ຮັບປະກັນບໍ່ໃຫ້ມີກໍລະນີຕົກເຮ່ຍເສຍຫາຍ ຫຼື ຕົກລົ່ນ ສະໜອງໃຫ້ຄະນະກຳມະການຂັ້ນແຂວງຮັບຊາບ ເພື່ອນຳເຂົ້າພິຈາລະນາໃນກອງປະຊຸມຄະນະກຳມະການ, ທັງນີ້ກໍ່ເພື່ອຫຼີກລ່ຽງຜົນກະທົບ ແລະ ຂໍ້ຂັດແຍ່ງຕ່າງໆຂອງປະຊາຊົນ ອາດຈະເກີດຂຶ້ນໃນອານາຄົດ.
3. ມີສິດສະເໜີແຕ່ງຕັ້ງແຕ່ງຕັ້ງຄະນະທີມງານວິຊາການຂະແໜງການກ່ຽວຂ້ອງຂັ້ນແຂວງ,ເມືອງ ທີ່ເຫັນວ່າມີຄວາມຈຳເປັນຕາມກອບໜ້າວຽກຕົວຈິງ;
4. ສະຫຼຸບ, ສັງລວມລາຍງານຈັດຕັ້ງປະຕິບັດເຄື່ອນໄຫວວຽກງານໃນແຕ່ລະໄລຍະ, ເຊື້ອເຊີນ, ຈັດກອງປະຊຸມ ແລະ ບັນທຶກວຽກງານທີ່ຄະນະກຳມະການ ໄດ້ຕົກລົງເຫັນດີເປັນເອກະພາບກັນແຕ່ລະໄລຍະຢ່າງເປັນປົກກະຕິ.
5. ຮ່າງນິຕິກຳ, ນະໂຍບາຍ ແລະ ວິທີການປ້ອງກັນບັນຫາທີ່ອາດຈະເກີດຂຶ້ນ ໃນໄລຍະດຳເນີນການຈັດຕັ້ງປະຕິບັດໂຄງການ ເພື່ອສະເໜີຄະນະກຳມະການ ພິຈາລະນາ ແລະ ຮັບຮອງ.
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກຳມະການຂັ້ນແຂວງ.

**ມາດຕາ3:** ສະຖານທີ່ເຮັດວຽກ ແລະ ງົບປະມານ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ມີດັ່ງນີ້:

1. ກຳນົດເອົາຂະແໜງສິ່ງແວດລ້ອມ (ພຊສ) ແຂວງເປັນຫ້ອງການປະສານງານ, ບ່ອນປະຈຳການ ແລະ ຈັດກອງປະຊຸມ ຂອງກອງເລຂາຄະນະກຳມະການຂັ້ນແຂວງ;
2. ງົບປະມານ, ເຄື່ອງອຸປະກອນຮັບໃຊ້ຫ້ອງການ ແລະ ພາຫະນະ ທີ່ນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານແມ່ນບໍລິສັດເຈົ້າຂອງໂຄງການເປັນຜູ້ຮັບຜິດຊອບ ຕາມທີ່ກຳນົດໄວ້ໃນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ແຜນງົບປະມານຂອງໂຄງການ;

**ມາດຕາ4:** ບັນດາຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ, ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມໄມ້ຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

- ຂໍ້ຕົກລົງສະບັບນີ້ແມ່ນປ່ຽນແທນຂໍ້ຕົກລົງຂອງທ່ານເຈົ້າແຂວງ, ເລກທີ 62/ຈຂ.ຊກ, ລົງວັນທີ 08/6/2020 ຂໍ້ຕົກລົງ ເລກທີ 93/ຈຂ.ຊກ, ລົງວັນທີ 08/8/2020 ແລະ ຂໍ້ຕົກລົງ ສະບັບເລກທີ 82/ຈຂ.ຊກ,ລົງວັນທີ 31/5/2019 ແລະ ຂໍ້ຕົກລົງເລກທີ 76/ຈຂ.ຊກ ລົງວັນທີ 25/5/2017;

**ມາດຕາ 5:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ເພັດໄຊ ສີວິໄລ



FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

สแกนด้วย CamScanner